Pathet Lao
Monday, March 5, 2018
Page 1 & 2

# ທູດຍີ່ປຸ່ນ ຈັດງານ ພົບປະກັບສື່ມວນຊົນ

ຂປລ: ໃນຕອນຄໍ່າວັນທີ 1 ມີນາ 2018 ທີ່ເຮືອນພັກທູດຍີ່ປຸ່ນ ນະຄອນຫລວງວຽງຈັນ, ທ່ານ ທາເຄຊິ ຣິຄິຣາຣະ ເອກອັກຄະລາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງປະເທດຍີ່ປຸ່ນ ປະຈຳ ສປປ ລາວ ໄດ້ຈັດງານລ້ຽງຕ້ອນຮັບ ແລະ ພົບປະສັງສັນກັບບັນດາສື່ມວນຊົນພາກສ່ວນຕ່າງໆທີ່ເຂົ້າຮ່ວມໂຄງການທັດສະນະສຶກສາ ແລະ ຢ້ຽມຢາມໂຄງການຮ່ວມມື ເພື່ອພັດທະນາຂອງປະເທດ

☛ ອ່ານຕໍ່ໜ້າ 2



## ທູດຍີ່ປຸ່ນ...

ຍີ່ປຸ່ນໃຫ້ແກ່ ສປປ ລາວ, ເຂົ້າຮ່ວມມີບັນດາອຳນວຍການໃຫຍ່, ບັນນາທິການ, ພ້ອມດ້ວຍແຂກຖືກເຊີນ.

ໂຄງການທັດສະນະສຶກສາໃນຄັ້ງນີ້ ຈັດຂຶ້ນເປັນຄັ້ງທຳອິດ ແລະ ໄດ້ໄປຢ້ຽມຊົມ 4 ໂຄງການເຊິ່ງຖືວ່າເປັນຕົວແທນຂອງບັນດາໂຄງການຊ່ວຍເຫລືອຈາກຍີ່ປຸ່ນເຊັ່ນ: ໂຄງການອາສາສະໝັກທີ່ໂຮງໝໍເມືອງທຸລະຄົມ, ໂຄງການຂະຫຍາຍເຂື່ອນໄຟຟ້ານ້ຳງື່ມ 1, ໂຄງການຂະຫຍາຍອາຄານຜູ້ໂດຍສານສະໜາມບິນສາກົນວັດໄຕ ແລະ ໂຄງການເສີມຂະຫຍາຍປະສິດທິພາບຂອງວິສາຫະກິດລົດເມນະຄອນຫລວງວຽງຈັນ.

ໃນໂອກາດດັ່ງກ່າວທ່ານທູດຍີ່ປຸ່ນກ່າວວ່າ: ໂຄງການຊ່ວຍເຫລືອຂອງຍີ່ປຸ່ນ ແມ່ນເກີດຂຶ້ນຢ່າງສະໝໍ່າສະເໝີນັບແຕ່ປີ 1955 ແລະ ໄດ້ຍົກລະດັບຂຶ້ນມາເປັນຍຸດທະສາດໃນປີ 2015. ຈາກນັ້ນ, ໃນປີ 2016 ໄດ້ວາງເອົາສາມເສົາຫລັກຄື: ການພັດທະນາການເຊື່ອມຈອດ, ການພັດທະນາຊັບພະຍາກອນດ້ານອຸດສາຫະກຳ, ການພັດທະນາສະຫວ່າງຕົວເມືອງ ແລະ ທ້ອງຖິ່ນ. ການທັດສະນະໂຄງການຂະຫຍາຍສະໜາມບິນສາກົນວັດໄຕ ແມ່ນການພັດທະນາການເຊື່ອມຈອດທາງອາກາດ ແລະ ເປັນໂຄງການໜຶ່ງທີ່ສຳຄັນຂອງການຮ່ວມມືສອງປະເທດ ຍີ່ປຸ່ນ-ລາວ ໂດຍມີການຍົກລະດັບທີ່ມີຄຸນນະພາບ, ມີມາດຕະຖານສາກົນ ທັງມີຄວາມຕື່ນຕົວໂປ່ງໃສ ແລະ ຍືນຍົງ.

ທ່ານທູດກ່າວຕື່ມວ່າ: ບັນດາສິ່ງດັ່ງກ່າວເຫລົ່ານີ້ ຈະນຳໄປສູ່ຄວາມຈະເລີນຮຸ່ງເຮືອງທາງດ້ານ ເສດຖະກິດ ແລະ ຫວັງວ່າສິ່ງເຫລົ່ານີ້ຈະນຳໄປສູ່ການພັດທະນາ ແລະ ເສີມສ້າງການຮ່ວມມືຂອງສອງປະເທດ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ໃຫ້ແໜ້ນ